# ເມືອງຈັນທະບູລີ ເຊື່ອມຊຶມດຳລັດວ່າດ້ວຍການປົກປ້ອງເງິນຝາກ




ສຳນັກງານປົກປ້ອງເງິນຝາກ (ສປງ) ສືບຕໍ່ເດີນໜ້າໃນການເຜີຍແຜ່ວຽກງານປົກປ້ອງເງິນຝາກ ໃຫ້ແກ່ສັງຄົມ ເຊິ່ງຄັ້ງນີ້ໄດ້ລົງເຜີຍແຜ່ ດຳລັດວ່າດ້ວຍການປົກປ້ອງເງິນຝາກ ໃຫ້ແກ່ບັນດາອົງການຈັດຕັ້ງລັດ ແລະ ບັນດາບ້ານອ້ອມຂ້າງ ເມືອງຈັນທະບູລີ ນະຄອນຫຼວງວຽງຈັນ ໃນຕອນເຊົ້າຂອງ ວັນທີ 14 ຕຸລາ 2020 ທີ່ຫ້ອງປະຊຸມເມືອງດັ່ງກ່າວ ພາຍໃຕ້ການເປັນປະທານຮ່ວມຂອງ ທ່ານ ບຸນໜາ ຜາທຸມມະວົງ ເຈົ້າເມືອງ ເມືອງຈັນທະບູລີ ແລະ ທ່ານ ນ. ແສງດາວວີ ວົງຄຳຊາວ ຫົວໜ້າສຳນັກງານປົກປ້ອງເງິນຝາກ (ສປງ). ພ້ອມນີ້ ກໍມີຄະນະນຳຂອງເມືອງ, ບັນດາຂະແໜງການ-ໜ່ວຍງານ, ບັນດາບ້ານອ້ອມຂ້າງ ເມືອງຈັນທະບູລີ ພ້ອມດ້ວຍວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ. ການເຜີຍແຜ່ດຳລັດວ່າດ້ວຍການປົກປ້ອງເງິນຝາກ ໃນຄັ້ງນີ້ ເປັນການຈັດຕັ້ງຜັນຂະຫຍາຍແຜນການວຽກງານຈຸດສຸມຂອງ ສປງ ປະຈຳປີ 2020 ແລະ ຊົມເຊີຍວັນສ້າງຕັ້ງ ສປງ ຄົບຮອບ 21 ປີ (23 ກັນຍາ 1999-23 ກັນຍາ 2020).





ກອງປະຊຸມເຜີຍແຜ່ໃນຄັ້ງນີ້, ທ່ານ ວົງເພັດ ໂງ່ນພະຈັນ ຫົວໜ້າພະແນກວິເຄາະ ແລະ ຄຸ້ມຄອງການຈ່າຍເງິນປົກປ້ອງ ໄດ້ຍົກໃຫ້ເຫັນຄວາມເປັນມາຂອງ ສປງ (ກອງທຶນປົກປ້ອງຜູ້ຝາກເງິນໃນເມື່ອກ່ອນ) ໄດ້ຮັບການສ້າງຕັ້ງຂຶ້ນໃນວັນທີ 23 ກັນຍາ 1999 ເປັນການຈັດຕັ້ງການເງິນຂອງລັດ, ມີຖານະທຽບເທົ່າກົມ, ເປັນນິຕິບຸກຄົນທີ່ເຄື່ອນໄຫວໂດຍບໍ່ສະແຫວງຫາຜົນກຳໄລ, ມີຄວາມເປັນເອກະລາດທາງດ້ານການເງິນ ແລະ ຢູ່ພາຍໃຕ້ ການຄຸ້ມຄອງຂອງ ທະນາຄານແຫ່ງ ສປປ ລາວ (ທຫລ) ຊຶ່ງມີພາລະບົດບາດເປັນເສນາທິການ ໃຫ້ແກ່ສະພາບໍລິຫານ ສປງ ແລະ ທຫລ ໃນການປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງຜູ້ຝາກເງິນ ເປັນສ່ວນໜຶ່ງທີ່ມີຄວາມສຳຄັນໃນຕາໜ່າງຄວາມປອດໄພ ຂອງຂະແໜງການເງິນ ແລະ ວຽກງານສຳຄັນອື່ນໆທີ່ຕິດພັນກັບຂະແໜງການທະນາຄານ ແລະ ສະຖາບັນການເງິນຢູ່ ສປປ ລາວ.

ພ້ອມນັ້ນ, ຍັງນຳສະເໜີຄວາມຈຳເປັນຂອງການສ້າງ ດຳລັດວ່າດ້ວຍການປົກປ້ອງເງິນຝາກ ຊຶ່ງເປັນການຍົກລະດັບບົດບາດທາງດ້ານການຈັດຕັ້ງຂອງ ສປງ ໃຫ້ມີຄວາມໜັກແໜ້ນເຂັ້ມແຂງ; ສ້າງຄວາມເຊື່ອໝັ້ນໃຫ້ແກ່ສັງຄົມ ຕໍ່ລະບົບສະຖາບັນການເງິນ ແລະ ປະກອບສ່ວນເຂົ້າໃນການຮັກສາສະຖຽນລະພາບຂອງ ລະບົບສະຖາບັນການເງິນຢູ່ ສປປ ລາວ ພ້ອມທັງນຳສະເໜີເນື້ອໃນບາງມາດຕາທີ່ສຳຄັນຈຳນວນໜຶ່ງ ທີ່ຈະເປັນປະໂຫຍດໃຫ້ແກ່ຜູ້ເຂົ້າຮ່ວມຮັບຟັງ ໂດຍສະເພາະການເຂົ້າເປັນສະມາຊິກຂອງສະຖາບັນການເງິນ (ທະນາຄານທຸລະກິດ), ການຈ່າຍເງິນປົກປ້ອງ ແລະ ການກຳນົດວົງເງິນປົກປ້ອງສູງສຸດຕາມລະບຽບການ ຊຶ່ງປັດຈຸບັນໄດ້ປັບໃຫ້ສູງຂຶ້ນລວມທຸກສະກຸນເງິນທຽບເທົ່າກີບ ຈຳນວນ 50.000.000 (ຫ້າສິບລ້ານ) ກີບ ຕໍ່ໜຶ່ງຄົນຕໍ່ໜຶ່ງສະຖາບັນການເງິນ; ຜູ້ຝາກເງິນຈະໄດ້ຮັບການປົກປ້ອງເງິນຝາກ ຈາກ ສປງ ໂດຍທັນທີທີ່ນຳເງິນໄປຝາກໄວ້ສະຖາບັນການເງິນທີ່ເປັນສະມາຊິກຂອງ ສປງ.




ໃນຕອນທ້າຍ ທ່ານ ນ. ແສງດາວວີ ວົງຄຳຊາວ ຫົວໜ້າ ສປງ ໄດ້ຕີລາຄາສູງຕໍ່ຜົນສຳເລັດ ໃນການເຊື່ອມຊຶມດຳລັດຄັ້ງນີ້ ຊຶ່ງເປັນການເຜີຍແຜ່ໃຫ້ອຳນາດການປົກຄອງທ້ອງຖິ່ນ ຮັບຊາບ, ເຂົ້າໃຈ ແລະ ນຳໄປຈັດຕັ້ງການເຜີຍແຜ່ໃຫ້ປະຊາຊົນ, ບຸກຄົນໃນຄອບຄົວ ລວມທັງການຈັດຕັ້ງຂອງຕົນ ໃຫ້ເຂົ້າໃຈຢ່າງຖືກຕ້ອງ-ທົ່ວເຖິງ. ຜ່ານການເຜີຍແຜ່ດຳລັດ ສະບັບນີ້ ສປງ ເຊື່ອໝັ້ນວ່າ: ຈະເປັນການເພີ່ມຄວາມຮັບຮູ້ ແລະ ເຂົ້າໃຈຈະແຈ້ງ ຕໍ່ກັບວຽກງານການປົກປ້ອງເງິນຝາກ, ການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ຝາກເງິນ ທັງປະກອບສ່ວນສ້າງຄວາມເຊື່ອໝັ້ນໃຫ້ແກ່ຜູ້ຝາກເງິນ ຕໍ່ລະບົບສະຖາບັນການເງິນຢູ່ ສປປ ລາວ ນັບມື້ນັບສູງຂຶ້ນ.

ຂ່າວ: ສຸກສະຫວັນ ຫຼວງສາມາດ

ພາບ: ບຸນນຳ ອິນທະວົງ

ກວດແກ້ ແລະ ຮຽບຮຽງ: ລາຕີ ສີຣາຊາ